ສະບັບທີ 01, ຊຸດທີ 01 (2026); 59- 65

ວາລະສານວິທະຍາສາດການເມືອງ-ການປົກຄອງ

www.jnappa.lci.la; ISSN: 3107-1163; E-ISSN: 3107-1171

DOI: https://doi.org/10.71026/jnappa.2026.010106



ກໍ່ສ້າງຮາກຖານການເມືອງຕິດພັນກັບ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຮາກຖານບ້ານ

Constructing political foundation related to national defense and security works at village level

ນ. ຈັນທະໝອມ ບັນດາວົງ; ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ

Email: cbandavong@gmail.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 25 ພຶດສະພາ 2025

ໄດ້ຮັບພາຍຫຼັງປັບປຸງ: 15 ກັນຍາ 2025

ຖືກຮັບຮອງ: 12 ພະຈິກ 2025

ຈັດພິມອອນລາຍ: 28 ກຸມພາ 2026

ບົດຄັດຫຍໍ້

ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນວຽກງານໜຶ່ງທີ່ສຳຄັນຂອງຊາດ ,ຮັບປະກັນໃຫ້ແກ່ການເຄື່ອນໄຫວຕ່າງໆ ແລະເປັນຍຸດທະສາດສຳຄັນຂອງພັກເຮົາ ຊຶ່ງນອນໃນ 4ເນື້ອໃນ4 ,ຄາດໝາຍໃນການສ້າງບ້ານ ແລະກຸ່ມບ້ານພັດທະນາຊຶ່ງໃນລັດຖະທຳມະນູນແຫ່ງ ສປປ ລາວໄດ້ກຳນົດວ່າ:ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນພັນທະຂອງທຸກການຈັດຕັ້ງ ແລະພົນລະເມືອງລາວທຸກຄົນ...ການຈັດຕັ້ງຮາກຖານການເມືອງ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກໍແມ່ນປະເພດການຈັດຕັ້ງໜຶ່ງຂອງພັກມີທີ່ຕັ້ງເປັນພື້ນຖານຂອງພັກ, ເປັນແກນນຳໃນລະບົບການເມືອງຢູ່ຮາກຖານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຕົ້ນແມ່ນຢູ່ສຳນັກງານ-ອົງການ, ກົມກອງ ແລະບ້ານ. ສະຫຼຸບແລ້ວ,ການກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນການຈັດຕັ້ງປະຕິບັດຄຳສັ່ງເລກທີ 09/ກມສພ ວ່າດ້ວຍການສ້າງບ້ານ ແລະກຸ່ມບ້ານພັດທະນາ; ຄຳສັ່ງແນະນຳ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 17/ຄລສພວ່າດ້ວຍການເພີ່ມທະວີວຽກງານກໍ່ສ້າງຮາກຖານຕິດພັນກັບການສ້າງບ້ານ ແລະກຸ່ມບ້ານພັດທະນາ; ຄຳສັ່ງເລກທີ 03/ກມສພ ວ່າດ້ວຍວຽກງານ 3 ສ້າງ, ທັງໝົດນັ້ນ ແມ່ນແນໃສ່ກໍ່ສ້າງ ແລະປັບປຸງລະບົບການເມືອງ ຢູ່ທ້ອງຖິ່ນຮາກຖານ ເພື່ອການເຄື່ອນໄຫວປະຕິບັດໜ້າທີ່ການເມືອງຂອງຕົນເອງຕາມທີ່ການຈັດຕັ້ງພັກ-ລັດ ແລະປະຊາຊົນມອບໝາຍໃຫ້.

ຄຳສັບສຳຄັນ : ຮາກຖານການເມືອງ, ຄວາມໝັ້ນຄົງ, ຂັ້ນບ້ານ

Abstract

National defense and public security are the critical tasks of the country for ensuring the application of various activities and an important strategy of our Party. As stated in the four contents and 4 strategic targets in building villages and village groups and the Constitution of the Lao PDR stipulated that National defense and public security are the obligations of all organizations and all Lao citizens. The establishment of political foundations related to national defense and public security is also an organizational type of the Party, located as the foundation of the Party, playing as leading axis in the political system at the national defense and security foundations, especially at offices, organizations, departments and villages. In summary, the construction of political foundations related to national defense and security work is the implementation of management order No. 09/PCCPL on building developed villages and village groups; also stated in the instruction of the Secretariat of the Central Committee of the Party No. 17/SCCPL on increasing the construction of political foundations related to building developed village and village groups. As well as the Order No. 03/PCCPL on the three-building work, all of these political directions are aimed at building and improving the political system at grassroots level for carrying out their own political duties as assigned by the Party, government and people.

Key words: Political foundation, Security, Village level.

I .ຄວາມຮັບຮູ້ ກ່ຽວກັບການກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ຮາກຖານບ້ານ.

1). ຄວາມຮັບຮູ້ ກ່ຽວກັບວຽກງານປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ.

-ຄວາມສຳນຶກ ກ່ຽວກັບວຽກງານປ້ອງກັນຊາດ.

ວຽກງານປ້ອງກັນຊາດ ແມ່ນພາລະກິດການປົກປັກຮັກສາປະເທດ ຂອງຊາດໃດໜຶ່ງ ຊຶ່ງໄດ້ສັງລວມທັງໝົດບັນດາການເຄື່ອນໄຫວທັງພາຍໃນ, ພາຍນອກ ກ່ຽວກັບວຽກງານການທະຫານ, ການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ວິທະຍາສາດຂອງລັດ ແລະຂອງປະຊາຊົນ ເພື່ອປ້ອງກັນປະເທດ, ສ້າງກຳລັງແຮງຮອບດ້ານ ໃນນັ້ນກຳລັງແຮງທາງດ້ານການທະຫານເປັນກຳລັງສຳຄັນໃນການຮັກສາສະຖຽນລະພາບໄວ້ໃຫ້ໝັ້ນຄົງ, ຕີຖອຍ, ສະກັດກັ້ນບັນດາການເຄື່ອນໄຫວທີ່ກໍ່ໃຫ້ເກີດມີສົງຄາມຂອງສັດຕູ ແລະຕີຊະນະສົງຄາມຮຸກຮານໃນທຸກຮູບແບບ, ທຸກເລ່ລ່ຽມໃຫ້ປະລາໄຊ. ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: “ຢືນຢູ່ຕໍ່ໜ້າພວກເຮົາບໍ່ມີໜ້າທີ່ອື່ນໃດນອກຈາກຕ້ອງໄດ້ດຳເນີນໄປພ້ອມໆກັບສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາແລະສ້າງສາປະເທດຊາດໝາຍເຖິງການກ້າວເຂົ້າສູ່ໄລຍະໃໝ່ ພວກເຮົາຕ້ອງໄດ້ແກ້ໄຂໄປພ້ອມໆກັນບັນດາໜ້າທີ່ຫຍຸ້ງຍາກສັບສົນ ຄື: ເມື່ອເຮັດການປະຕິວັດຊາດສຳເລັດແລ້ວ ພວກເຮົາຕ້ອງໄດ້ດຳເນີນການປ້ອງກັນຊາດ” (ຄະນະອົບຮົມສູນກາງພັກ, 2013, ໜ້າ 368).

ນາຍທະຫານກອງທັບປະຊາຊົນລາວ “ແມ່ນພະນັກງານຂອງພັກ ແລະລັດທີ່ມີຊັ້ນແຕ່ຊັ້ນຮ້ອຍຕີເຖິງຊັ້ນພົນເອກ ໂດຍມີເຄື່ອງໝາຍຊັ້ນ, ເຄື່ອງໝາຍທຽບຊັ້ນ, ເຄື່ອງໝາຍເຫຼົ່າຣົບ, ເຄື່ອງໝາຍເຫຼົ່າທັບ ແລະເຄື່ອງແບບສະເພາະ ຊຶ່ງລັດຖະບານເປັນຜູ້ກຳນົດ” (ສະພາແຫ່ງຊາດ, 2018, ໜ້າ 3).

ປ້ອງກັນຊາດທ່ອປ່ວງຊົນ ແມ່ນມີລັກສະນະທ່ອປ່ວງຊົນທີ່ມາຈາກປະຊາຊົນ, ໂດຍປະຊາຊົນ ແລະເພື່ອປະຊາຊົນຂະຫຍາຍຕົວຕາມທິດທ່ອປ່ວງຊົນ, ຮອບດ້ານ, ຄວາມເປັນເອກະລາດ, ເປັນເຈົ້າຕົນເອງ, ກຸ້ມຕົນເອງ, ເພິ່ງຕົນເອງແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໃຫ້ນັບມື້ທັນສະໄໝ; ສົມທົບແໜ້ນການພັດທະນາເສດຖະກິດກັບວຽກງານປ້ອງກັນຊາດພາຍໃຕ້ການນຳພາຂອງພັກ, ການຄຸ້ມຄອງຂອງລັດ, ໂດຍເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນບັນດາເຜົ່າ; ແນໃສ່ປົກປັກຮັກສາສັນຕິພາບ, ສະຖຽນລະພາບຂອງຊາດ, ກຽມພ້ອມຕີຊະນະ

ທຸກການເຄື່ອນໄຫວຮຸກຮານຈາກອິດທິກຳລັງປໍລະປັກພາຍນອກ ແລະການກໍ່ກະບົດລຸກຮື້ຂຶ້ນຂອງສັດຕູຢູ່ພາຍໃນ, ຕີເອົາຊະນະທຸກຮູບການເຄື່ອນໄຫວມ້າງເພທຳລາຍຂອງສັດຕູ, ປົກປັກຮັກສາປະເທດຊາດໄວ້ໃຫ້ໝັ້ນຄົງຖາວອນ .ກໍ່ສ້າງພື້ນຖານປ້ອງກັນຊາດທ້ອປວງຊົນ ແມ່ນຄວາມຮັບຜິດຊອບ ຂອງທ້ອປວງຊົນ, ຂອງທັງໝົດລະບົບການເມືອງ,ໃນນັ້ນໄດ້ຖືເອົາກຳລັງປະກອບອາວຸດເປັນກຳລັງຫຼັກແຫຼ່ງ.

-ຄວາມສຳນຶກ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ.

ກຳລັງປ້ອງກັນຄວາມສະຫງົບ "ແມ່ນກຳລັງປະກອບອາວຸດມາຈາກປະຊາຊົນ, ໂດຍປະຊາຊົນ, ຮັບໃຊ້ປະຊາຊົນ ແລະເພື່ອຜົນປະໂຫຍດ ຂອງປະຊາຊົນລາວບັນດາເຜົ່າ ຊຶ່ງຢູ່ໃຕ້ການນຳພາ, ຊີ້ນຳເດັດຂາດ, ໂດຍກົງ, ຮອບດ້ານ ຂອງພັກປະຊາຊົນປະຕິວັດລາວ ແລະຢູ່ພາຍໃຕ້ການຄຸ້ມຄອງຂອງລັດ, ມີພາລະບົດບາດປົກປັກຮັກສາສະຖຽນລະພາບທາງດ້ານການເມືອງ,..." (ສະພາແຫ່ງຊາດ, 2017, ໜ້າ 1).

ວຽກງານປ້ອງກັນຄວາມສະຫງົບ ແມ່ນພາກສ່ວນໜຶ່ງທີ່ສຳຄັນຍິ່ງໃນຂະບວນການປະຕິວັດຂອງພັກຕິດແໜ້ນກັບການປະຕິບັດໜ້າທີ່ການເມືອງຂອງພັກ ໂດຍສະເພາະໃນເງື່ອນໄຂທີ່ພັກ-ລັດເຮົາໄດ້ເປີດກວ້າງການພົວພັນຮ່ວມມືກັບບັນດາປະເທດໃນໂລກ ໂດຍບໍ່ຈຳແນກລະບອບການເມືອງ, ບົດບາດຂອງວຽກງານປ້ອງກັນຄວາມສະຫງົບຍິ່ງມີຄວາມໝາຍສຳຄັນ ແລະມີລັກສະນະຮອບດ້ານ ໄປຕາມໜ້າທີ່ການເມືອງ ຂອງພັກ .

ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນວຽກງານໜຶ່ງທີ່ສຳຄັນຂອງຊາດ, ຮັບປະກັນໃຫ້ແກ່ການເຄື່ອນໄຫວຕ່າງໆ ແລະເປັນຍຸດທະສາດສຳຄັນຂອງພັກເຮົາ ຊຶ່ງນອນໃນ 4 ເນື້ອໃນ, 4ຄາດໝາຍໃນການສ້າງບ້ານ ແລະກຸ່ມບ້ານພັດທະນາ, ແນໃສ່ເພື່ອປົກປັກຮັກສາລະບອບການເມືອງ, ທັບມ້າງກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ຖືວ່າທຸກຄົນຕ້ອງປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບແມ່ນພັນທະ ແລະກຽດສະຫງ່າຂອງຕົນຊຶ່ງໃນລັດຖະທຳມະນູນແຫ່ງ ສປປ ລາວໄດ້ກຳນົດວ່າ: "ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນພັນທະ ແລະໜ້າທີ່ຂອງທຸກການຈັດຕັ້ງ ແລະພົນລະເມືອງລາວທຸກຄົນ ໂດຍແມ່ນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຫຼັກແຫຼ່ງໃນການປົກປັກຮັກສາເອກະລາດ, ອຳນາດອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ;ປົກປັກຮັກສາຊີວິດ ແລະຊັບສິນຂອງປະຊາຊົນ, ຮັບປະກັນສະຖຽນລະພາບ ແລະຄວາມໝັ້ນຄົງ ຂອງລະບອບປະຊາທິປະໄຕປະຊາຊົນ" [8,9].

2). ຄວາມຮັບຮູ້ ກ່ຽວກັບການກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ການກໍ່ສ້າງຮາກຖານການເມືອງ ແມ່ນການກໍ່ສ້າງຄະນະຮາກຖານ ແລະສະມາຊິກພັກຮັບຮູ້ ແລະເປັນເຈົ້າການຈັດຕັ້ງການຜະລິດ, ປ່ຽນແປງຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈ ຂອງປະຊາຊົນເຜົ່າຕ່າງໆ ໃຫ້ດີຂຶ້ນເທື່ອລະກ້າວ; ເຮັດໃຫ້ການຈັດຕັ້ງຮາກຖານພັກ ແລະສະມາຊິກພັກ ຮູ້ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຮັດໃຫ້ຮາກຖານມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ.

ການຈັດຕັ້ງຮາກຖານການເມືອງ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກໍ່ແມ່ນປະເພດການຈັດຕັ້ງອັນໜຶ່ງຂອງພັກມີທີ່ຕັ້ງເປັນພື້ນຖານຂອງພັກ, ເປັນແກນນຳໃນລະບົບການເມືອງ ຢູ່ຮາກຖານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຕົ້ນ ແມ່ນຢູ່ສຳນັກງານ-ອົງການ, ກົມກອງ ແລະບ້ານ;ເປັນບ່ອນດຳລົງຊີວິດຂອງປະຊາຊົນບັນດາເຜົ່າທຳການຜະລິດກະສິກຳເປັນຕົ້ນຕໍ ແລະຍັງຕິດພັນກັບທຳມະຊາດເປັນສ່ວນຫຼາຍ, ສະມັດຕະພາບການຜະລິດ ຍັງຕ່ຳພຽງແຕ່ພໍກຸ້ມຢູ່ກຸ້ມກິນ, ການຜະລິດກະສິກຳເປັນສິນຄ້າບໍ່ທັນຂະຫຍາຍຕົວສູງ, ລາຍຮັບຂອງທະຫານ, ຕຳຫຼວດ ແລະປະຊາຊົນພົນລະເມືອງຍັງຕ່ຳ, ຍັງຂາດພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອຮັບໃຊ້ການຜະລິດ ແລະຊີວິດການເປັນຢູ່.

3). ບົດບາດ, ຄວາມສຳຄັນ, ທັດສະນະຂອງພັກ ແລະນະໂຍບາຍຂອງລັດ ຕໍ່ການກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

+ບົດບາດການກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

- ບົດບາດໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ ຢູ່ຮາກຖານແມ່ນເລັ່ງໃສ່ເຮັດໃຫ້ບັນດາກົມກອງ, ທ້ອງຖິ່ນເຂົ້າໃຈເລິກຊຶ້ງ ແລະກຳແໜ້ນເນື້ອໃນຈິດໃຈ ເພື່ອສູ້ຊົນບຸກທະລຸໃນການປັບປຸງ, ກໍ່ສ້າງກຳລັງໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ເພື່ອຫັນເອົາໜ້າທີ່ ແລະແຜນງານໃນການຮັບປະກັນໃຫ້ປະເທດຊາດມີຄວາມສະຫງົບໂດຍພື້ນຖານຕ້ອງໄດ້ສຸມໃສ່ວຽກງານກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດຮອບດ້ານ, ສ້າງທ່າສະໜາມສົງຄາມປະຊາຊົນຕິດພັນແນວທາງ ປກຊ-ປກສ ທ້ອປວງຊົນຮອບດ້ານຂອງພັກ ຢູ່ຮາກຖານໄດ້ຮັບການພັດທະນາດີຂຶ້ນເປັນກ້າວໆ. ສະນັ້ນ, "ຄະນະບໍລິຫານງານກະຊວງປ້ອງກັນປະເທດ ເປັນຄະນະພັກໜຶ່ງໃຕ້ການນຳພາ-ຊີ້ນຳເດັດຂາດ, ໂດຍກົງ, ຮອບດ້ານຈາກກົມການເມືອງສູນກາງພັກ ມີພາລະບົດບາດຮັບຜິດຊອບໂດຍກົງໃນການປະຕິບັດໜ້າທີ່

ໃຫຍ່ ຂອງກອງທັບຄື: ປັບປຸງ-ກໍ່ສ້າງພັກ, ກໍ່ສ້າງກຳລັງໃນທຸກດ້ານ ໃຫ້ເຕີບໃຫຍ່, ໜັກແໜ້ນ ແລະເຂັ້ມແຂງສາມາດເຮັດຫຼ້ອນໜ້າທີ່ ...” (ກະຊວງປ້ອງກັນປະເທດ, 2020), ໜ້າ1).

-ບົດບາດໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມ ສະຫງົບ ຢູ່ຮາກຖານ .ພະນັກງານຂັ້ນຮາກຖານ ແລະປະຊາຊົນຊັ້ນ ຄົນຕ່າງໆໃນຂອບເຂດຕົນຮັບຜິດຊອບໃຫ້ກຳແໜ້ນແນວທາງປ້ອງ ກັນຄວາມສະຫງົບທົ່ວປວງຊົນ ແລະເປັນໜ້າທີ່ຂອງໝົດທຸກຄົນ; ຍົກສູງສະຕິລະວັງຕົວ, ຕ້ານທຸກການເຄື່ອນໄຫວມ້ຽງເພທຳລາຍຂອງ ສັດຕູ ແລະພວກຄົນບໍ່ດີ, ເຊີດຊູສະຕິປ້ອງກັນພາຍໃນ, ຮັກສາ ຄວາມລັບ ແລະປົກປັກຮັກສາຊັບສົມບັດຂອງລັດ, ລວມໝູ່ ແລະ ຂອງປະຊາຊົນ; ນຳພາສ້າງບ້ານ ແລະກຸ່ມບ້ານປ້ອມໝັ້ນສູ້ຮົບ, ປັບປຸງກຳລັງກອງຫຼອນ ປກສ ໃຫ້ເຂັ້ມແຂງ, ເຄື່ອນໄຫວປົກປັກ ຮັກສາຂອບເຂດຕົນຮັບຜິດຊອບໃຫ້ມີຄວາມສະຫງົບ-ປອດໄພ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ກວດກາຄຸ້ມຄອງສຳມະໂນ ຄົວ ແລະສ້າງຄອບຄົວໃຫ້ປອດຄະດີ.

+ ຄວາມສຳຄັນຂອງການກໍ່ສ້າງຮາກຖານການເມືອງຕິດພັນ ກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

-ການກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານປ້ອງ ກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມສຳຄັນຕໍ່ການຍົກສູງຄຸນ ນະພາບທາງດ້ານການເມືອງ ຢູ່ຮາກຖານ .ກ່ອນອື່ນໝົດແມ່ນການ ຄົ້ນຄວ້າເຊື່ອມຊຶມແນວທາງ, ນະໂຍບາຍ, ກົດລະບຽບພັກ, ກົດໝາ ຍ ແລະລະບຽບການຕ່າງໆຂອງລັດ; ເມື່ອເຊື່ອມຊຶມກຳແໜ້ນແລ້ວ ກໍຫັນມະຕິ, ຄຳສັ່ງ ຂອງຄະນະພັກຂັ້ນເທິງເປັນແຜນການ, ໂຄງການ ຂອງຕົນ, ຄົ້ນຄວ້າຕົກລົງເປັນມະຕິ, ວິທີການຈັດຕັ້ງປະຕິບັດ ເພື່ອ ນຳພາປະຕິບັດໜ້າທີ່ການເມືອງຢູ່ຮາກຖານ ພ້ອມທັງຈັດຕັ້ງນຳພາ ບັນດາໝ່ວຍພັກຂຶ້ນກັບປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ໃຫ້ຖືກຕ້ອງ .

-ການກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານປ້ອງ ກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມສຳຄັນຕໍ່ການກໍ່ສ້າງພັກ ໃຫ້ປອດໃສ, ເຂັ້ມແຂງ ແລະໜັກແໜ້ນ .ການຈັດຕັ້ງຮາກຖານພັກ ມີຄຸນນະພາບແມ່ນຄະນະພັກ ແລະສະມາຊິກພັກທັງໝົດບັນລຸໄດ້ ຕົວເລກາດໝາຍ ຂອງການກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນການນຳພາ; ມີການຊຸກຍູ້, ຕິດຕາມ, ກວດກາບັນດາ ໝ່ວຍພັກທີ່ຕົນຮັບຜິດຊອບໃຫ້ເອົາໃຈໃສ່ສຶກສາອົບຮົມ ແລະ ກໍ່ສ້າງມະຫາຊົນ ເພື່ອຂະຫຍາຍເຂົ້າເປັນສະມາຊິກພັກ.

-ການກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານປ້ອງ ກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມສຳຄັນຕໍ່ການຊີ້ນຳ, ຕິດຕາມ, ກວດກາບັນດາໝ່ວຍພັກ, ສະມາຊິກພັກທີ່ຂຶ້ນກັບ .ຄະນະ ພັກຮາກຖານມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ຈຶ່ງສາມາດນຳ ພາ, ຊີ້ນຳບັນດາໝ່ວຍພັກທີ່ຂຶ້ນກັບເອົາໃຈໃສ່ກໍ່ສ້າງໝ່ວຍພັກໃຫ້ ປອດໃສ, ເຂັ້ມແຂງ, ໜັກແໜ້ນ.ປະຕິບັດລະບອບປະຊຸມສາມັນ ແລະລະບອບດຳເນີນຊີວິດພັກເປັນປົກກະຕິ, ສຶກສາອົບຮົມ ການເມືອງ-ແນວຄິດໃຫ້ສະມາຊິກພັກ, ທະຫານ, ຕຳຫຼວດ ແລະ ມະຫາຊົນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນກຳແໜ້ນ ແລະນຳພາ ປະຕິບັດກົດລະບຽບພັກ, ຕ້ານການເສື່ອມຄຸນປ່ຽນທາດການເມືອງ ຂອງສະມາຊິກພັກ.ຕິດຕາມ, ກວດກາການເຄື່ອນໄຫວ ຂອງບັນດາ ໝ່ວຍພັກ, ສະມາຊິກພັກທີ່ຂຶ້ນກັບເປັນປົກກະຕິ.

+ ທັດສະນະຂອງພັກຕໍ່ການກໍ່ສ້າງຮາກຖານການເມືອງຕິດພັນ ກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນ ປະຕິວັດລາວ ໄດ້ໃຫ້ທັດສະນະວ່າ :“ກຳລັງປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບ ຕ້ອງຕັ້ງໜ້າເຂົ້າຮ່ວມ ແລະປະຕິບັດວຽກງານ 3 ສ້າງ ໂດຍສະເພາະແມ່ນການສ້າງບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດ ໝາຍຕິດພັນກັບການສ້າງທ່າສະໜາມ 3 ຂັ້ນ, ສົມທົບແໜ້ນ ລະຫວ່າງ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບກັບການ ພັດທະນາເສດຖະກິດ-ສັງຄົມ...” (ວາລະສານອາລຸນໃໝ່, 2016, ໜ້າ 53-54).

ເອກະສານກອງປະຊຸມໃຫຍ່ ຄັ້ງທີ XIຂອງພັກປະຊາຊົນ ປະຕິວັດລາວ ໃຫ້ທັດສະນະວ່າ: “ຕັ້ງໜ້າປັບປຸງ, ກໍ່ສ້າງກຳລັງ ປະກອບອາວຸດ ໃຫ້ນັບມື້ນັບເຕີບໃຫຍ່ເຂັ້ມແຂງ, ສ້າງທັງ 3 ປະເພດກຳລັງໄປພ້ອມໆກັນຕິດພັນກັບການເພີ່ມທະວີການປະກອບ ອາວຸດຍຸດໂທບາຍປະກອບອັນຈຳເປັນ ແລະທັນສະໄໝ, ຫັດແອບ ສິລະປະຍຸດ, ຍຸດທະວິທີໃຫ້ມີຄວາມຊຳນິຊຳນານ ວາລະສານອາ ລຸນໃໝ່, 2021, ໜ້າ 47-48).

+ນະໂຍບາຍຂອງລັດຕໍ່ການກໍ່ສ້າງຮາກຖານການເມືອງຕິດພັນ ກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ເພື່ອຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ກ່ຽວ ກັບການກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບນັ້ນລັດໄດ້ມີຄວາມພະຍາຍາມຫັນເອົາ ແນວທາງນະໂຍບາຍຂອງພັກໃຫ້ເປັນອັນລະອຽດ ຊຶ່ງສະແດງອອກໃນ ດຳລັດເລກທີ 93/ນຍ, ລົງວັນທີ 13/03/2007 ວ່າດ້ວຍການຈັດຕັ້ງ

ແລະການເຄື່ອນໄຫວຂອງກຳລັງກອງຫຼອນ, ປກສ ບ້ານ, ປກສ ກຸ່ມ ບ້ານ, ກຳລັງປ້ອງກັນພາຍໃນ ແລະກຳລັງປະກອບອາວຸດ .ໃນ ມາດຕາ 4 ຂອງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບ ປະຊາຊົນ)ສະບັບປັບປຸງ(ກຳນົດວ່າ :ລັດໃຫ້ຄວາມສຳຄັນໃນການ ສ້າງ ແລະພັດທະນາກຳລັງປ້ອງກັນຄວາມສະຫງົບ ໃຫ້ເຕີບໃຫຍ່ ເຂັ້ມແຂງຮອບດ້ານ, ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວ ຄິດ, ຄວາມຮູ້, ຄວາມສາມາດປະກອບສ່ວນເຂົ້າໃນວຽກງານປ້ອງ ກັນຄວາມສະຫງົບ ຢ່າງຕັ້ງໜ້າ .ພ້ອມກັນນີ້, ໃນມາດຕາ 4 ຂອງ ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ)ສະບັບ ປັບປຸງ (ໄດ້ກຳນົດວ່າ :ລັດຊຸກຍູ້, ສົ່ງເສີມ, ກໍ່ສ້າງ ແລະປະຕິບັດ ນະໂຍບາຍຕໍ່ນາຍທະຫານໃຫ້ເຕີບໃຫຍ່ເຂັ້ມແຂງຮອບດ້ານ, ມີ ຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ຄວາມຮູ້, ຄວາມ ສາມາດ ແລະເປັ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ, ຈິດໃຈ ເພື່ອ ຮັບປະກັນໃຫ້ນາຍທະຫານເຮັດສຳເລັດໜ້າທີ່ໃນການປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ.

II .ຜົນສຳເລັດ ແລະບັນຫາທີ່ຕັ້ງຂຶ້ນໃນການຈັດຕັ້ງປະຕິບັດ ການກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ຮາກຖານບ້ານ.

1.(ຜົນສາເລັດໃນການຈັດຕັ້ງປະຕິບັດການກໍ່ສ້າງຮາກຖານ ການເມືອງຕິດພັນກັບວຽກງານປ້ອງກັນຊາດ ຢູ່ຮາກຖານບ້ານ.

ໄດ້ເລືອກເຟັ້ນພະນັກງານນັບທັງກຳລັງຫຼວງ ແລະກຳລັງ ທ້ອງຖິ່ນໃນທົ່ວກອງທັບຈຳນວນ 4.557 ສະຫາຍ ເຂົ້າຝຶກອົບຮົມ ບັນດານິຕິກຳ, ຄຳສັ່ງແນະນຳກ່ຽວກັບວຽກງານກໍ່ສ້າງຮາກຖານ ການເມືອງ ໄດ້ 170 ຊຸດ ຈັດຕັ້ງກຳລັງລົງສູ່ຮາກຖານປະຊາຊົນ ປະຈຳຢູ່ບັນດາຈຸດສຸມພັດທະນາ ເພື່ອດຳເນີນວຽກງານກໍ່ສ້າງຮາກ ຖານການເມືອງດ້ວຍ 2 ຮູບການ ຄື :ທາງກວ້າງ ແລະທາງເລິກ ດັ່ງນີ້:

-ກໍ່ສ້າງຮາກຖານທາງກວ້າງ :“ບັນດາກົມກອງທະຫານ ຫຼວງ-ທະຫານທ້ອງຖິ່ນ ໄດ້ຫັນກຳລັງລົງກໍ່ສ້າງຮາກຖານຕາມ ມູນເຊື້ອຂອງກອງທັບ, ກົມກອງຕັ້ງທັບຢູ່ບ່ອນໃດພົວພັນສະໜິດແ ໜ້ນກັບອຳນາດການປົກຄອງປະຊາຊົນຢູ່ບ່ອນນັ້ນ .ມາຮອດ ປັດຈຸບັນມີ 1.103 ຫົວໜ່ວຍກົມກອງ, ມີຈານວນພົນ 4.121 ສະຫາຍ, ຍິງ 354 ສະຫາຍ; ໃນທົ່ວກອງທັບລົງຮາກຖານແບບ ມູນເຊື້ອ ກວມເອົາ 17 ແຂວງ, 1 ນະຄອນຫຼວງ, 3 ນະຄອນ, 145 ເມືອງ, ມີ 2.453 ບ້ານເພື່ອຊ່ວຍເຫຼືອປະຊາຊົນທຳການຜະລິດແກ້ ໄຂຊີວິດການເປັນຢູ່ ແລະຮັກສາຄວາມສະຫງົບ, ຄວາມເປັນ ລະບຽບຮຽບຮ້ອຍທາງສັງຄົມ.

-ກໍ່ສ້າງຮາກຖານທາງເລິກ: ໂດຍປະຕິບັດຕາມທິດ 3 ສ້າງ ຂອງສູນກາງ ແລະການຕົກລົງເຫັນດີ ຂອງຄະນະນຳກະຊວງປ້ອງກັນ ປະເທດ ໄດ້ສົມທົບກັບບັນດາກົມກອງນັບທັງກຳລັງຫຼວງ-ກຳລັງ ທ້ອງຖິ່ນ ສ້າງຕັ້ງກອງປະຕິບັດງານກໍ່ສ້າງຮາກຖານການເມືອງຂຶ້ນຕື່ມ ອີກ 8 ກອງຕາມການສະເໜີຂອງທ້ອງຖິ່ນ .ມາຮອດປັດຈຸບັນມີ 19 ກອງປະຕິບັດງານ ມີຈຳນວນພົນ 436 ສະຫາຍ, ຍິງ 6 ສະຫາຍ, ລົງ ກໍ່ສ້າງຮາກຖານການເມືອງຕາມ 4 ເນື້ອໃນ 4 ຄາດໝາຍຕິດພັນກັບ ວຽກງານ 3 ສ້າງຢູ່ຕາມຈຸດສຸມພັດທະນາເຂດທຸລະກັນດານ, ຫ່າງໄກ ສອກຫຼີກຂອງແຂວງ, ຂອງເມືອງ ກວມເອົາ 15 ແຂວງ, 26 ເມືອງ, 28 ຈຸດສຸມ, 210 ບ້ານໃນຂອບເຂດທົ່ວປະເທດ. ສົມທົບກັບ ທ້ອງຖິ່ນກະຕຸກຊຸກຍູ້ບັນດາເຜົ່າ ຫັນການຜະລິດແບບປະຖົມປະຖານ ອາໄສທຳມະຊາດແບບກຸ້ມຢູ່ກຸ້ມກິນ ມາຜະລິດເປັນສິນຄ້າດ້ວຍ ການຈັດຕັ້ງເປັນກຸ່ມຜະລິດ ເຊັ່ນ :ກຸ່ມຫັດຖະກຳ, ກຸ່ມປູກຝັ່ງ, ກຸ່ມ ລ້ຽງສັດ ໄດ້ 253 ກຸ່ມ ມີ 9.038 ຄອບຄົວ .ສຳລັບພະນັກງານກໍ່ສ້າງ ຮາກຖານຫຼາຍສະຫາຍໄດ້ມີບົດຮຽນພົດຕິກຳກ່ຽວກັບວຽກງານກໍ່ສ້າງ ຮາກຖານ, ໃນນີ້ໄດ້ຖືກແຕ່ງຕັ້ງເປັນນາຍບ້ານ 22 ສະຫາຍ, ເປັນ ເລຂາພັກບ້ານ 22 ສະຫາຍ, ເປັນຄະນະພັກກຸ່ມບ້ານ 89 ສະຫາຍ, ເປັນຄະນະພັກເມືອງ 134ສະຫາຍ, ໄດ້ຮັບການຍ້ອງຍໍປະເພດຕ່າງໆ ເຊັ່ນ :ກົມກອງລວມໝູ່ 530 ກົມກອງ, ບຸກຄົນ 438 ສະຫາຍ, ຍິງ 5 ສະຫາຍ, ເລື່ອນຊັ້ນຂັ້ນຕ່າງໆ 2.113 ສະຫາຍ ຍິງ 39 ສະຫາຍ ແລະຫຼາຍສະຫາຍຖືກສັບຊ້ອນໄປຮັບໜ້າທີ່ໃໝ່ສູງກວ່າເກົ່າ” (ກະຊວງປ້ອງກັນປະເທດ, 2020, ໜ້າ 3-7).

2). ຜົນສຳເລັດໃນການຈັດຕັ້ງປະຕິບັດການກໍ່ສ້າງຮາກຖານ ການເມືອງຕິດພັນກັບວຽກງານປ້ອງກັນຄວາມສະຫງົບ ຢູ່ຮາກຖານ ບ້ານ.

ການຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງ ໂດຍອີງໃສ່ມະຕິ 09 ແລະ03/ກມສພ ແລະ ຄຳສັ່ງແນະນຳຂອງ ທ່ານລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 157 ແລະ659/ປກສ ຊຶ່ງໄດ້ຈັດຕັ້ງປະຕິບັດຕາມ 4 ເນື້ອໃນ 4 ຄາດ ໝາຍ ແລະຕາມ 3 ທິດ ຄື :ທິດຕົວເມືອງໃຫຍ່, ທິດຫ່າງໄກສອກຫຼີກ ແລະທິດຊາຍແດນ .ຜ່ານການຈັດຕັ້ງປະຕິບັດວຽກງານສົກປີ 2019-2020 ສາມາດເຮັດໄດ້ບັນດາວຽກງານ ດັ່ງນີ້:

-ວຽກງານ ປກສ ກຸ່ມບ້ານ :“ຝຶກອົບຮົມຫັດແອບສ້າງບ້ານ ປ້ອມໝັ້ນ-ກຸ່ມບ້ານສູ້ຮົບຕິດລ່ຽນ ຢູ່ແຂວງວຽງຈັນ ແລະຈຳປາສັກ; ລົງເຮັດບົດບັນທຶກສັນຍາປ້ອງກັນຄວາມສະຫງົບແຂວງທີ່ຕິດທາງ ລົດໄຟຈຳນວນ 5 ແຂວງ ຄື :ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ອຸດົມໄຊ, ຫຼວງນ້ຳທາ ແລະຫຼວງພະບາງ; ມີ 1.166 ກຸ່ມ, ມີກຳລັງ

ປກສ ກຸ່ມບ້ານ ຈຳນວນ 5.459 ຄົນ, ຍິງ 177 ຄົນ, ມີກຸ່ມບ້ານທີ່ຫ່າງໄກສອກຫຼີກ 245 ກຸ່ມ, ມີ ປກສ ກຸ່ມອາໄສຢູ່ 899 ຄົນ, ຍິງ 2 ຄົນ; ສາມາດສ້າງບ້ານປ້ອງກັນຄວາມສະຫງົບໄດ້ 3.409 ບ້ານ ກວມເອົາ 40 ຂອງຈຳນວນບ້ານທັງໝົດ 8.455 ບ້ານ.

-ວຽກງານ ປກສ ບ້ານ :ເອົາໃຈໃສ່ປະສານສົມທົບກັບທ້ອງຖິ່ນຈັດຕັ້ງເຄື່ອນໄຫວເຮັດວຽກງານວິຊາສະເພາະ ເປັນຕົ້ນ ຊຸກຍູ້ການຝຶກອົບຮົມກຳລັງ ປກສ ບ້ານທົ່ວປະເທດ ແລະກໍ່ສ້າງ ປັບປຸງກຳລັງ ປກສ ບ້ານຕາມບົດແນະນຳກົມຄຸ້ມຄອງສຳມະໂນ ຄົວ ແລະກໍ່ສ້າງຮ່າງກົດໝາຍ ເລກທີ 4164/ຄກຖ, ລົງວັນທີ 8 ສິງຫາ 2018 ກຳລັງ ປກສ ບ້ານມີ 85.491 ຄົນ, ຍິງ 1.307 ຄົນ; ສ້າງຄອບຄົວປ້ອງກັນຄວາມສະຫງົບໄດ້ 487.387 ຄອບຄົວ ເທົ່າກັບ 42 ; ສ້າງບ້ານປ້ອມໝັ້ນ-ກຸ່ມບ້ານສູ້ຮົບຕິດລ່ຽນໄດ້ 344 ບ້ານ; ຊຸກຍູ້ໃຫ້ກອງບັນຊາການ ປກສ ແຂວງ, ນະຄອນຫຼວງວຽງຈັນປັບປຸງກຳລັງ ປກສ ບ້ານໃນທົ່ວປະເທດໄດ້ 37.278 ສະຫາຍ, ຍິງ 693 ສະຫາຍ; ເກັບກາສະຖິຕິບ້ານປ້ອງກັນຄວາມສະຫງົບດີ 3 ປີຊ້ອນໄດ້ 7 ແຂວງ, ມີບ້ານທີ່ໄດ້ຮັບໃບຢັ້ງຢືນທັງໝົດ 79 ບ້ານ; ສະໜອງຂໍ້ມູນວຽກງານວິຊາສະເພາະ ກ່ຽວກັບການສ້າງບ້ານປ້ອມໝັ້ນ-ກຸ່ມບ້ານສູ້ຮົບຕິດລ່ຽນ ໃຫ້ແຂວງ ຄຳມ່ວນ ແລະແຂວງເຊກອງ"]6,5.[

-ວຽກງານສຳມະໂນຄົວລາວ :"ໃນທົ່ວປະເທດມີ 17 ແຂວງ, 1 ນະຄອນຫຼວງວຽງຈັນ, ມີ 3 ນະຄອນ, ມີ 145 ເມືອງ, ມີ 8.439 ບ້ານ, ມີ 1.238.556 ຫຼັງຄາເຮືອນ, ມີ 1.333.909 ຄອບຄົວ; ມີພົນລະເມືອງທັງໝົດ 6.970.079 ຄົນ, ຍິງ 3.457.206 ຄົນ; ອາຍຸ 15 ປີຂຶ້ນໄປມີ 4.541.489 ຄົນ, ຍິງ 2.348.005 ຄົນ ຂຶ້ນທະບຽນສາມະໂນຄົວແລ້ວ 1.283.642 ຄອບຄົວ, ມີ 6.814.503 ຄົນ, ຍິງ 3.375.446 ຄົນ; ອາຍຸ 15 ປີຂຶ້ນໄປມີ 4.460.755 ຄົນ, ຍິງ 2.307.808 ຄົນ; ຍັງບໍ່ໄດ້ຂຶ້ນທະບຽນສຳມະໂນຄົວມີ 50.267 ຄອບຄົວ, ມີ 155.576 ຄົນ, ຍິງ 81.760 ຄົນ; ອາຍຸ 15 ປີຂຶ້ນໄປມີ 81.094 ຄົນ, ຍິງ 40.197 ຄົນ.

-ວຽກງານສຳມະໂນຄົວ ແລະອອກບັດຕ່າງດ້າວ :ໃນທົ່ວປະເທດມີຊາວຕ່າງດ້າວທັງໝົດ 4.057 ຄອບຄົວ, ມີ 8.929 ຄົນ, ຍິງ 4.183 ຄົນ, ລວມມີ 37 ສັນຊາດ; ຂຶ້ນປຶ້ມສາມະໂນຄົວໃໝ່ໄດ້ 154 ຄອບຄົວ, ຈຳນວນ 317 ຄົນ, ຍິງ 129 ຄົນ; ປ່ຽນປຶ້ມສຳມະໂນຄົວຕ່າງດ້າວໄດ້ 90 ຄອບຄົວ, ຈຳນວນ 265 ຄົນ, ຍິງ 137 ຄົນ; ຍົກຍ້າຍສາມະໂນຄົວຕ່າງດ້າວໄດ້ 9 ຄອບຄົວ, ຈຳນວນ 14 ຄົນ, ຍິງ 5 ຄົນ; ແຍກປຶ້ມສາມະໂນຄົວຕ່າງດ້າວໄດ້ 8 ຄອບຄົວ, ຈຳນວນ 13 ຄົນ, ຍິງ 4 ຄົນ; ຮັບເອກະສານຂໍສັນຊາດລາວ 26 ສະບັບ, ຈຳນວນ 27 ຄົນ, ຍິງ 11 ຄົນ; ພິມບັດປະຈຳຕົວຕ່າງດ້າວ ສຳເລັດ ແລະຈັດສົ່ງເຈົ້າຂອງໄດ້ 767 ບັດ, ຍິງ 355 ບັດ·

-ວຽກງານອອກບັດປະຈຳຕົວລາວ :ຕິດຕາມກວດກາການປ້ອນຂໍ້ມູນຮູບຖ່າຍ, ພິມລາຍນິ້ວມືເຂົ້າສູ່ໂປຼແກຣມໃນວຽກງານຄຸ້ມຄອງພົນລະເມືອງດ້ວຍລະບົບທັນສະໄໝຢູ່ 9 ຕົວເມືອງໃນນະຄອນຫຼວງວຽງຈັນສາມາດພິມບັດແບບໃໝ່ໄດ້ 83.585 ບັດ, ຍິງ 45.076 ບັດ, ພິມບັດປະຈຳຕົວແບບໃໝ່ໃຫ້ບ້ານຈັນສະຫວ່າງ ເມືອງສີໂຄດຕະບອງໄດ້ 843 ບັດ, ອອກບັດໃຫ້ການນຳ 180 ບັດ; ພິມບັດປະຈຳຕົວແຂວງໄຊສົມບູນໄດ້ 2.791 ບັດ, ຍິງ 1.340 ບັດ; ລວມອອກບັດໄດ້ທັງໝົດໃຫ້ 15 ແຂວງ ແລະຍັງ 2 ແຂວງບໍ່ທັນໄດ້ພິມບັດແບບໃໝ່ມີແຂວງວຽງຈັນ ແລະແຂວງເຊກອງ; ມີບັດບໍ່ໄດ້ມາດຕະຖານ 3.075 ບັດ"]6,6-7.[

-ວຽກງານນະໂຍບາຍ :"ຢ້ຽມຢາມພະນັກງານເຈັບເປັນນອນໂຮງໝໍ 13 ຄັ້ງ, ຊ່ວຍເຫຼືອເປັນເງິນຈຳ ນວນ 3.597.000 ກີບ; ສະເໜີສ້າງຄອບຄົວ 63 ສະຫາຍ, ຍິງ 6 ສະຫາຍ; ອະນຸມັດພະນັກງານລາພັກປະຈຳປີ, ລາພັກເກີດລູກມີ 92 ສະຫາຍ, ຍິງ 26 ສະຫາຍ; ໄດ້ຮັບຍ້ອງຍໍຂັ້ນກະຊວງ ປກສ 261 ສະຫາຍ, 1 ກົມກອງ; ຮັບຍ້ອງຍໍຂັ້ນກົມໃຫຍ່ການເມືອງ ປກສ 74 ສະຫາຍ, 2 ກົມກອງ ແລະຮັບຍ້ອງຍໍຂັ້ນເຈົ້າຄອງນະຄອນຫຼວງ 304 ສະຫາຍ, 3 ກົມກອງ"] 6,8-9.[

ສົກ 2020-2021 ສາມາດເຮັດໄດ້ບັນດາວຽກງານ ດັ່ງນີ້:

-ວຽກງານ ປກສ ກຸ່ມບ້ານ :"ປກສ ກຸ່ມບ້ານທົ່ວປະເທດມີ 1.160 ກຸ່ມບ້ານ; ມີກຳລັງ ປກສ ບ້ານ 5.471 ສະຫາຍ, ຍິງ 181 ສະຫາຍ; ກຸ່ມບ້ານຫ່າງໄກສອກຫຼີກ 226 ກຸ່ມບ້ານ, ມີກຳລັງ ປກສ ກຸ່ມບ້ານ 861 ສະຫາຍ, ຍິງ 4 ສະຫາຍ; ສ້າງປົດບັນທຶກສັນຍາປ້ອງກັນຄວາມສະຫງົບຕາມເສັ້ນທາງລົດໄຟລາວ-ຈີນ ຢູ່ບ້ານນາຄູນ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ; ສ້າງປົດບັນທຶກຢູ່ບັນດາກຸ່ມບ້ານ , ບັນດາບ້ານຕິດເສັ້ນທາງລົດໄຟແຂວງຫຼວງພະບາງ ແລະຝຶກອົບຮົມວຽກງານວິຊາສະເພາະຂອງກຳລັງ ປກສ ກຸ່ມ-ປກສ ບ້ານ 2 ຕົວເມືອງ ແຂວງບໍ່ແກ້ວ, ສ້າງທ່າສະໜາມປ້ອງກັນຕົວ ຢູ່ເມືອງຊະນະຄາມ, ແຂວງວຽງຈັນ, ຝຶກອົບຮົມວຽກງານຄຸ້ມຄອງ ສຳມະໂນຄົວ ແລະປກສ ກຸ່ມບ້ານໄລຍະສັ້ນ 5 ວັນປະຈຳປີ 2020 ຢູ່ ປກສ ນະຄອນຫຼວງວຽງຈັນ.

- ວຽກງານ ປກສ ບ້ານ: ກຳລັງ ປກສ ບ້ານທົ່ວປະເທດມີ 8.428 ບ້ານ, ມີ 85.688 ໜ່ວຍ, ມີກຳລັງ ປກສ ບ້ານທັງໝົດ 81.295 ສະຫາຍ, ຍິງ 878 ສະຫາຍ, ປັບປຸງກຳລັງ ປກສ ບ້ານ ໄດ້ 42.782 ສະຫາຍ, ຍິງ 579 ສະຫາຍ, ຝຶກອົບຮົມ ປກສ ບ້ານໄດ້ 34.463 ສະຫາຍ, ຍິງ 498 ສະຫາຍ; ເອົາໃຈໃສ່ ປະສານສົມທົບກັບທ້ອງຖິ່ນຈັດຕັ້ງເຄື່ອນໄຫວເຮັດວຽກງານວິຊາ ສະເພາະຊຸກຍູ້ໃຫ້ທ້ອງຖິ່ນສ້າງຄອບຄົວ ແລະບ້ານປ້ອງກັນຄວາມ ສະຫງົບດີໄດ້ 31.033 ຄອບຄົວ, ມີ 182 ບ້ານ; ປະສານສົມທົບ ກັບກົມໃຫຍ່ເສນາທິການ ແລະກົມທະຫານທ້ອງຖິ່ນ, ກະຊວງປ້ອງ ກັນປະເທດລົງກວດກາ, ເກັບກຳຂໍ້ມູນ ແລະເປີດຊຸດຝຶກອົບຮົມສູ້ ຮົບຈັ້ງທ່າ-ສ້າງທ່າສະໜາມປ້ອງກັນບໍລິເວນ ຢູ່ເມືອງຊະນະຄາມ, ແຂວງວຽງຈັນ ແລະລົງເກັບກຳຂໍ້ມູນການຝຶກອົບຮົມສູ້ຮົບຈັ້ງທ່າ-ສ້າງທ່າສະໜາມປ້ອງກັນບໍລິເວນ ຢູ່ເມືອງມູນລະປະໂມກ, ແຂວງ ຈຳປາສັກ" (ກະຊວງປ້ອງກັນຄວາມສະຫງົບ, 2020, ໜ້າ 4).

-ວຽກງານສຳມະໂນຄົວລາວ :"ໃນທົ່ວປະເທດມີ 17 ແຂວງ,1 ນະຄອນຫຼວງ, ມີ 3 ນະຄອນ, ມີ 145 ເມືອງ, ມີ 8.439 ບ້ານ, ມີ 1.238.556 ຫຼັງຄາເຮືອນ, ມີ 1.333.909 ຄອບຄົວ; ມີພົນລະເມືອງທັງໝົດ 6.970.079 ຄົນ, ຍິງ 3.457.206 ຄົນ; ອາຍຸ 15 ປີຂຶ້ນໄປມີ 4.541.489 ຄົນ, ຍິງ 2.348.005 ຄົນ; ຂຶ້ນທະບຽນສາມະໂນຄົວແລ້ວ 1.283.642 ຄອບຄົວ, ມີ 6.814.503 ຄົນ, ຍິງ 3.375.446 ຄົນ; ອາຍຸ 15 ປີຂຶ້ນໄປມີ 4.460.755 ຄົນ, ຍິງ 2.307.808 ຄົນ; ຍັງບໍ່ໄດ້ຂຶ້ນ ທະບຽນສຳມະໂນຄົວມີ 50.267 ຄອບຄົວ, ມີ 155.576 ຄົນ, ຍິງ 81.760 ຄົນ; ອາຍຸ 15 ປີຂຶ້ນໄປມີ 81.094 ຄົນ, ຍິງ 40.197 ຄົນ; ເກັບກາສະພາບການປັບປຸງປຶ້ມສາມະໂນຄົວໄດ້ 8 ແຂວງຄື :ແຂວງຊຽງຂວາງ, ໄຊຍະບູລີ, ຫົວພັນ, ຜົ້ງສາລີ, ຫຼວງນ້ຳ ທາ, ບໍລິຄຳໄຊ,ສາລະວັນ ແລະແຂວງຈຳປາສັກມີ 8.977ຄອບຄົວ, ຈຳນວນ 47.433 ຄົນ, ຍິງ24.239 ຄົນ; ຄົນເພີ່ມ 3.060 ຄົນ, ຍິງ 1.463 ຄົນ; ຄົນຫຼຸດ 833 ຄົນ, ຍິງ 337 ຄົນ.

-ວຽກງານສຳມະໂນຄົວ ແລະອອກບັດຕ່າງດ້າວ :ໃນທົ່ວ ປະເທດມີຊາວຕ່າງດ້າວທັງໝົດ 4.312 ຄອບຄົວ, ມີ 9.463 ຄົນ, ຍິງ 4.403 ຄົນ, ລວມມີ 39 ສັນຊາດ; ຂຶ້ນປຶ້ມສາມະໂນຄົວໃ ໝ່ໄດ້ 147 ຄອບຄົວ, ຈຳນວນ 322 ຄົນ, ຍິງ 131 ຄົນ; ປ່ຽນປຶ້ມ ສຳມະໂນຄົວຕ່າງດ້າວໄດ້ 33 ຄອບຄົວ, ຈຳນວນ 125 ຄົນ, ຍິງ 62 ຄົນ; ຍົກຍ້າຍສາມະໂນຄົວຕ່າງດ້າວໄດ້ 16 ຄອບຄົວ, ຈຳນວນ 29 ຄົນ, ຍິງ 14 ຄົນ; ແຍກປຶ້ມສາມະໂນຄົວຕ່າງດ້າວໄດ້ 10 ຄອບຄົວ, ຈຳນວນ 14 ຄົນ, ຍິງ 7 ຄົນ; ຮັບເອກະສານຂໍສັນຊາດ ລາວແຕ່ປີ 2010-2020 ໄດ້ 435 ຄົນ, ຍິງ 190 ຄົນ, ຮັບ ເອກະສານໄດ້ສັນຊາດລາວແລ້ວ 422 ຄົນ, ຍິງ 189 ຄົນ; ພິມ ບັດປະຈຳຕົວຕ່າງດ້າວສຳເລັດ ແລະຈັດສົ່ງເຈົ້າຂອງໄດ້ 818 ບັດ, ຍິງ 367 ບັດ·

-ວຽກງານອອກບັດປະຈຳຕົວລາວ :ຕິດຕາມກວດກາການ ປ້ອນຂໍ້ມູນຮູບຖ່າຍ, ພິມລາຍນິ້ວມືເຂົ້າສູ່ໂປຼແກຣມ ໃນວຽກງານຄຸ້ມ ຄອງພົນລະເມືອງດ້ວຍລະບົບທັນສະໄໝຢູ່ 9 ຕົວເມືອງໃນ ນະຄອນຫຼວງວຽງຈັນ, ສາມາດພິມບັດແບບໃໝ່ໄດ້ 38.301 ບັດ, ຍິງ 21.398 ບັດ, ອອກບັດໃຫ້ການນາ 161 ບັດ; ພິມບັດປະຈາຕົວ ແຂວງໄຊສົມບູນໄດ້ 1.302 ບັດ, ຍິງ 655 ບັດ; ລວມອອກບັດໄດ້ ທັງໝົດໃຫ້ 16 ແຂວງ ແລະນະຄອນຫຼວງໄດ້ 83.894 ບັດ, ຍິງ 43.677 ບັດ; ມີບັດບໍ່ໄດ້ມາດຕະຖານ 2.061 ບັດ" (ກະຊວງປ້ອງ ກັນຄວາມສະຫງົບ, 2020, ໜ້າ 5-6).

-ວຽກງານນະໂຍບາຍ :"ຍ້ອງຍໍຜົນງານປະກອບສ່ວນເຂົ້າໃນ ວຽກງານປົ້ນລົງກໍ່ສ້າງຮາກຖານການເມືອງ ຢູ່ນະຄອນຫຼວງວຽງຈັນ ໄລຍະ 2 ປີ 2017-2019 ຄື :ຮັບຫຼຽນໄຊພິລະອາດຫານຊັ້ນ III ໃຫ້ ກົມ 1 ໜ່ວຍ; ຮັບຫຼຽນໄຊແຮງງານຊັ້ນ II ມີ 4 ສະຫາຍ; ຮັບຫຼຽນ ໄຊແຮງງານຊັ້ນ III ມີ 41 ສະຫາຍ; ຮັບຫຼຽນກາແຮງງານ 33 ສະຫາຍ; ຮັບໃບຍ້ອງຍໍລັດຖະບານ 4 ສະຫາຍ; ຍ້ອງຍໍຂັ້ນກະຊວງ 7 ສະຫາຍ ແລະຍ້ອງຍໍຂັ້ນກົມໃຫຍ່ການເມືອງ 17 ສະຫາຍ; ຢ້ຽມຢາມ ພະນັກງານເຈັບເປັນນອນໂຮງໝໍ 33 ຄັ້ງ, ຊ່ວຍເຫຼືອເປັນເງິນຈຳນວນ 14.465 .000ກີບ; ສະເໜີສ້າງຄອບຄົວ 48 ສະຫາຍ, ຍິງ 3 ສະຫາຍ; ອະນຸມັດພະນັກງານລາພັກປະຈຳປີ, ລາພັກເກີດລູກມີ 98 ສະຫາຍ, ຍິງ 36 ສະຫາຍ (ກະຊວງປ້ອງກັນຄວາມສະຫງົບ ,2020, ໜ້າ 8-9).

2). ບັນຫາທີ່ຕັ້ງຂຶ້ນໃນການຈັດຕັ້ງປະຕິບັດການກໍ່ສ້າງຮາກ ຖານການເມືອງ ຕິດພັນກັບວຽກງານປ້ອງກັນຊາດ -ປ້ອງກັນຄວາມ ສະຫງົບ ຢູ່ຮາກຖານບ້ານ.

ຜ່ານການຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຕາມ 4 ເນື້ອໃນ 4 ຄາດໝາຍ ໃນໄລຍະຜ່ານມາ ຍັງມີບັນຫາທີ່ຕັ້ງຂຶ້ນ ດັ່ງນີ້:

-ການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ກຳລັງ ປກຊ-ປກສ ແລະປະຊາຊົນບັນດາຜ່ຳຢູ່ບ້ານ ຍັງບໍ່ທັນສາມາດເຮັດໄດ້ຢ່າງ ທົ່ວເຖິງເຂດເປົ້າໝາຍ, ຫຼາຍບ່ອນໄດ້ແຕ່ປະລິມານ, ບໍ່ຮັບປະກັນຄຸນ ນະພາບ, ຄວາມຮັບຮູ້ ແລະຄວາມກະຕືລືລົ້ນໃນການພັດທະນາຕົນເອງ ຂອງກຳລັງ ປກຊ-ປກສ ແລະປະຊາຊົນບັນດາຜ່ຳຢູ່ບ້ານ ຍັງບໍ່ສູງເທົ່າ ທີ່ຄວນ, ຄວາມເຂົ້າໃຈຕໍ່ແນວທາງນະໂຍບາຍ ຂອງພັກ, ນະໂຍບາຍ

ຂອງລັດ ຍັງບໍ່ທັນເລິກຊຶ້ງ ແລະກວ້າງຂວາງ.

-ການຫັນກຳລັງ ປກຊ-ປກສ ລົງຮາກຖານບ້ານ ຍັງ ແບບລວມໆ, ບໍ່ທັນນຳພາອົງການປົກຄອງບ້ານ, ປະຊາຊົນສ້າງ ແຜນການ, ໂຄງການ ແລະພາເຮັດຕົວຈິງ; ເຖິງວ່າທາງດ້ານຕົວເລກ ອັດຕາບ້ານທຸກຍາກ, ຄອບຄົວທຸກຍາກຫຼຸດລົງ, ຂະບວນການແກ້ ໄຂຄວາມທຸກຍາກ ແລະການສ້າງບ້ານພັດທະນາມີຄວາມຄືບໜ້າ, ແຕ່ໃນບາງບ້ານສະພາບເດັກນ້ອຍຊົນນະບົດທີ່ດ້ອຍໂອກາດ ຍັງມີ ຫຼາຍ.

-ການຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານພັກຕິດພັນ ກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບ້ານ ຍັງເຮັດ ບໍ່ທັນໄດ້ດີເທົ່າທີ່ຄວນ, ການສ້າງບ້ານປອດຄະດີ, ປອດຢາເສບ ຕິດຈຳນວນໜຶ່ງໄດ້ແຕ່ປະລິມານ ຍັງບໍ່ທັນໄດ້ຄຸນນະພາບ (ໄດ້ແຕ່ ຕອນມີແຜນເຮັດ, ແຜນກວດເມື່ອປະຕິບັດແຜນແລ້ວ ບ້ານດັ່ງກ່າວ ກໍ່ກັບສູ່ສະພາບເດີມ), ປາກົດການຫຍໍ້ທໍ້ຕ່າງໆຢູ່ຫຼາຍບ້ານມີທ່າອ່ຽງ ເພີ່ມຂຶ້ນ, ຕົວເລກຂອງບ້ານປອດຄະດີ, ບ້ານປອດຢາເສບຕິດ ຢູ່ບາງ ແຂວງ ແລະເມືອງຈຳນວນໜຶ່ງ ຍັງບໍ່ທັນຫຼຸດລົງໄດ້ຢ່າງຂາດຕົວ.

-ພາລະບົດບາດ ແລະຂອບເຂດສິດທີ່ເປັນເສນາທິການໃນ ວຽກງານກໍ່ສ້າງຮາກຖານພັກຕິດພັນກັບວຽກງານປ້ອງກັນຊາດ-ປ້ອງ ກັນຄວາມສະຫງົບຕາມ 4 ເນື້ອໃນ 4 ຄາດໝາຍ ຢູ່ບາງບ່ອນຍັງບໍ່ ທັນໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ; ການເຮັດວຽກປະສານ ງານຕ່າງໆກັບຂະແໜງການ ແລະທ້ອງຖິ່ນຍັງເຮັດບໍ່ໄດ້ດີເທົ່າທີ່ ຄວນ .

III .ວິທີການກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

1). ຍົກສູງຄວາມຮັບຜິດຊອບ ຂອງຄະນະພັກ, ຄະນະ ບັນຊາ, ອົງການປົກຄອງ ແລະພາກສ່ວນກ່ຽວຂ້ອງ ຕໍ່ວຽກງານ ກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງ ກັນຄວາມສະຫງົບ.

ຄະນະພັກ, ຄະນະບັນຊາ, ອົງການປົກຄອງ ແລະພາກສ່ວນ ທີ່ກ່ຽວຂ້ອງ ຄວນເປັນເຈົ້າການໃນການຄົ້ນຄວ້າ, ເຊື່ອມຊຶມ, ກຳແ ໜ້ນມະຕິ, ຄຳສັ່ງ, ທິດທາງແຜນການ ຂອງສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ ຢ່າງ ເລິກເຊິ່ງ ແລະສາມາດນຳພາ-ຊີ້ນຳຫັນເປັນແຜນການ, ໂຄງການ ລະອຽດຢ່າງມີຫົວຄິດປະດິດສ້າງ, ສອດຄ່ອງກັບຈຸດພິເສດຂອງບ້ານ , ເປັນເຈົ້າການ ແລະເປັນແບບຢ່າງໃນການນຳພາ-ຊີ້ນຳປຸກລະດົມ, ຂົນຂວາຍທົ່ວປວງຊົນເຂົ້າຮ່ວມໃນການຈັດຕັ້ງປະຕິບັດຕົວຈິງ, ມີ ການນຳພາທີ່ເປັນເອກະພາບສູງມີການຄຸ້ມຄອງທີ່ເຂັ້ມງວດ-ຮັດກຸມ, ສະເໝີພາບແທດເຖິງທຸກຮາກຖານ, ມີການຕິດຕາມກວດກາ, ປະ ເມີນຜົນການຈັດຕັ້ງປະຕິບັດຢ່າງເປັນປະຈຳ ແລະມີລະບອບ ນະໂຍບາຍທີ່ເໝາະສົມ ຕໍ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

2). ການກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານປ້ອງ ກັນຊາດ-ປ້ອງກັນຄວາມສະຫງົບ ຄວນເຮັດຢ່າງມີຈຸດສຸມໂດຍຖືເອົາ 4 ເນື້ອໃນ 4 ຄາດໝາຍ ຕິດພັນກັບວຽກງານ 3 ສ້າງ.

ສ້າງໃຫ້ມີການປ່ຽນແປງໃໝ່ຢ່າງຮອບດ້ານຢູ່ບ້ານ,ເຂດຫ່າງໄກ ສອກຫຼີກ, ເຂດທີ່ໝັ້ນພື້ນຖານການປະຕິວັດ, ເຂດເມືອງ, ບ້ານວິລະ ຊົນ, ບໍລິເວນລຽບຊາຍແດນຈຸດຫຼໍ່ແຫຼມ ແລະເຂດຊົນເຜົ່າທີ່ມີຄວາມ ຫຍຸ້ງຍາກເຮັດໃຫ້ເຂດເຫຼົ່ານັ້ນໄດ້ຮັບການພັດທະນາຢ່າງຕັ້ງໜ້າ,ປັບປຸງ ລະບົບການເມືອງຢູ່ຮາກຖານໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນເປັນຕົ້ນແມ່ນຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ອົງການປົກຄອງ, ອົງການຈັດຕັ້ງແນວໂຮມ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງຊາວໜຸ່ມ, ແມ່ຍິງ ໂດຍຈັດຕັ້ງການຝຶກອົບຮົມພາລະ ບົດບາດ, ໜ້າທີ່, ແບບແຜນວິທີການເຄື່ອນໄຫວໃຫ້ແກ່ບັນດາອົງ ການຈັດຕັ້ງດັ່ງກ່າວພ້ອມທັງຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ. ທັງ ໝົດນັ້ນແມ່ນແນໃສ່ສ້າງໃຫ້ເກີດມີບ້ານອັດທະນະທຳ, ບ້ານໃຫຍ່ ເປັນໃຈກາງທາງດ້ານເສດຖະກິດ-ສັງຄົມ ແລະກາຍເປັນຕົວເມືອງ ນ້ອຍໃນຊົນນະບົດ; ຖືເອົາຄອບຄົວ,ບ້ານ, ກຸ່ມບ້ານ ແລະເມືອງທຸກ ຍາກ ເປັນເປົ້າໝາຍໃນການແກ້ໄຂຄວາມທຸກຍາກ ດ້ວຍການຊຸກຍູ້ ສົ່ງເສີມການຜະລິດສິນຄ້າຢ່າງແຂງແຮງ,ຊອກແຫຼ່ງຈຳໜ່າຍທີ່ໝັ້ນຄົງ ແລະຮັບປະກັນດ້ານລາຄາສິນຄ້າໃຫ້ຄົງທີ່ ໂດຍອີງໃສ່ທ່າແຮງບໍ່ມ ຊ້ອນພາຍໃນ ໃຫ້ນັບມື້ຫຼາຍຂຶ້ນ.

3). ສ້າງບ້ານປ້ອມໝັ້ນ ແລະກຸ່ມບ້ານສູ້ຮົບຕິດລ່ຽນ ໃຫ້ມີ ຄວາມເຂັ້ມແຂງ.

ການສ້າງບ້ານປ້ອມໝັ້ນ ແລະກຸ່ມບ້ານສູ້ຮົບຕິດລ່ຽນ ເນື້ອແທ້ ແມ່ນການປັບປຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີ ຄວາມໜັກແໜ້ນ, ເຂັ້ມແຂງ ແລະທັນສະໄໝເທື່ອລະກ້າວ ໂດຍຖືເອົາ ວຽກງານດັ່ງກ່າວເປັນພື້ນຖານທັ້ງເປັນສິ່ງຮັບປະກັນ ໃຫ້ແກ່ການສ້າງ ຄວາມມີສະຖຽນລະພາບທາງດ້ານການເມືອງ ແລະຄວາມໝັ້ນຄົງ ຂອງລະບອບປະຊາທິປະໄຕປະຊາຊົນຢູ່ບ້ານ .ສະນັ້ນ, ຄະນະພັກ, ອົງການປົກຄອງ ແລະຄະນະ ປກຊ-ປກສ ແຕ່ລະຂັ້ນ ຕ້ອງໄດ້ຈັດຕັ້ງ ຜັນຂະຫຍາຍແນວທາງ ປກຊ-ປກສ ທົ່ວປວງຊົນ, ຮອບດ້ານເປັນ ແຜນການ, ໂຄງການ, ມີມາດຕະການລະອຽດ ແລະຫັນເອົາກຳລັງລົງ ສຸມໃສ່ແກ້ໄຂຈຸດຮ້ອນ ແລະຈຸດຫຼໍ່ແຫຼມຕ່າງໆຂອງແຕ່ລະເຂດ,

ແຂວງ, ເມືອງ ແລະບ້ານ ໂດຍສົມທົບກັບການກໍ່ສ້າງຮາກຖານ ການເມືອງ, ພັດທະນາຊົນນະບົດຮອບດ້ານໄປພ້ອມກັບການສຶກສາ ອົບຮົມການເມືອງ-ແນວຄິດ ໃຫ້ປະຊາຊົນຍົກສູງສະຕິລະວັງຕົວ, ສະກັດກັ້ນ-ຕ້ານ ແລະແກ້ໄຂທຸກສະພາບການຕ່າງໆທີ່ເກີດຂຶ້ນ, ເອົາໃຈໃສ່ສ້າງທ່າສະໜາມສາມຂັ້ນຕິດພັນກັບການສ້າງບ້ານປ້ອມໝັ້ນແລະກຸ່ມບ້ານສູ້ຮົບຕິດລ່ຽນ, ປັບປຸງການຈັດຕັ້ງ ແລະບຳລຸງ ຝຶກແອບສົມລະປະຍຸດ-ຍຸດທະວິທີ ໃຫ້ກຳລັງກອງຫຼວນ ແລະ ປກສ ບ້ານ-ກຸ່ມບ້ານຢ່າງເປັນປະຈຳ ແນໃສ່ຍົກສູງສະຕິກຽມພ້ອມສູ້ຮົບເມື່ອມີຄວາມຕ້ອງການ.

ສັງລວມແລ້ວ, ການກໍ່ສ້າງຮາກຖານການເມືອງ ຕິດພັນກັບ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນການຈັດຕັ້ງ ປະຕິບັດ ຄຳສັ່ງເລກທີ 09/ກມສພ ວ່າດ້ວຍການສ້າງບ້ານ ແລະກຸ່ມ ບ້ານພັດທະນາ; ຄຳສັ່ງແນະນຳ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ17/ຄລສພ ວ່າດ້ວຍການເພີ່ມທະວີວຽກງານກໍ່ສ້າງ ຮາກຖານຕິດພັນກັບການສ້າງບ້ານ ແລະກຸ່ມບ້ານພັດທະນາ; ຄຳສັ່ງ ເລກທີ 03/ກມສພ ວ່າດ້ວຍວຽກງານ 3 ສ້າງ, ທັງໝົດນັ້ນ ແມ່ນ ແນໃສ່ກໍ່ສ້າງ ແລະປັບປຸງລະບົບການເມືອງ ຢູ່ທ້ອງຖິ່ນຮາກຖານ ເພື່ອການເຄື່ອນໄຫວປະຕິບັດໜ້າທີ່ການເມືອງຂອງຕົນ ຕາມທີ່ ການຈັດຕັ້ງພັກ-ລັດ ແລະປະຊາຊົນມອບໝາຍໃຫ້ ນັ້ນຄືນຳພາທຸກ ການຈັດຕັ້ງ ແລະຂົງເຂດວຽກງານຢູ່ທ້ອງຖິ່ນ, ຮາກຖານ ແນໃສ່ສ້າງ ການຈັດຕັ້ງ ແລະວຽກງານດັ່ງກ່າວມີຄວາມປອດໃສ, ເຂັ້ມແຂງ ແລະໜັກແໜ້ນສາມາດແບກຫາບໜ້າທີ່ການເມືອງອັນໜັກໜ່ວງ ຢູ່ ທ້ອງຖິ່ນ, ຮາກຖານ ເປັນຕົ້ນແມ່ນຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ, ນະໂຍບາຍ ແລະລະບຽບ, ກົດໝາຍຂອງ ລັດໃຫ້ປາກົດຜົນເປັນຈິງ, ປະຕິບັດວຽກງານ 3 ສ້າງໃຫ້ເຂົ້າສູ່ລວງ ເລິກ ແລະລວງກວ້າງ ຢ່າງມີປະສິດທິຜົນສູງສຸດ, ທັງໝົດນີ້ແນໃສ່ ສ້າງໃຫ້ລະບົບການເມືອງ ຢູ່ທ້ອງຖິ່ນໃຫ້ມີຄວາມໝັ້ນຄົງ, ເສດຖະກິດໄດ້ຮັບການຂະຫຍາຍຕົວຢ່າງຖືກທິດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ວັດທະນະທຳ-ສັງຄົມ ໄດ້ຮັບການປົກປັກຮັກສາ ແລະເສີມຂະຫຍາຍ, ການພົວພັນພາຍໃນ ແລະພາຍນອກ ນັບມື້ເປີດກວ້າງ ແລະຊີວິດການເປັນຢູ່ຂອງ ປະຊາຊົນ ນັບມື້ໄດ້ຮັບການປັບປຸງດີຂຶ້ນເປັນກ້າວ, ສັງຄົມມີ ຄວາມສີວິໄລ, ຍຸຕິທຳ.

ເອກະສານອ້າງອີງ

ກະຊວງປ້ອງກັນຄວາມສະຫງົບ. (2019). *ບົດສະ ຫຼຸບຂອງກົມ ຄຸ້ມຄອງສຳມະໂນຄົວ ແລະກໍ່ສ້າງຮາກຖານກະຊວງປ້ອງກັນ ຄວາມສະຫງົບປະຈຳປີ 2019 ແລະທິດທາງແຜນການປີ 2020.*

ກະຊວງປ້ອງກັນຄວາມສະຫງົບ. (2020). *ບົດສະ ຫຼຸບຂອງກົມຄຸ້ມ ຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານກະຊວງປ້ອງກັນ ຄວາມສະຫງົບປະຈຳປີ 2020 ແລະທິດທາງແຜນການ ປີ 2021.*

ກະຊວງປ້ອງກັນປະເທດ. (2020). *ບົດສະຫຼຸບຕີລາຄາຜົນສຳເລັດ ການຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງ ພັດທະນາຊົນນະບົດຮອບດ້ານຕິດພັນກັບວຽກງານ 3 ສ້າງທ່ວ ກອງທັບ ໃນໄລຍະ 5 ປີ (2016-2020) ແລະທິດທາງ, ແຜນການ 5 ປີ (2021-2025).*

ກະຊວງປ້ອງກັນປະເທດ. (2020). *ບົດລາຍງານການເມືອງຕໍ່ກອງ ປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກກະຊວງປ້ອງ ກັນປະເທດ.*

ຄະນະອົບຮົມສູນກາງພັກ. (2013). *ໄກສອນ ພົມວິຫານ ຍືນຍົງໃນ ພາລະກິດປະຕິວັດອັນຍິ່ງໃຫຍ່ ຂອງປະຊາຊົນລາວບັນດາເຜົ່າ ຕະຫຼອດໄປ.* ໂຮງພິມແຫ່ງລັດ.

ສະພາແຫ່ງຊາດ. (2017). *ກົດໝາຍ ວ່າດ້ວຍປ້ອງກັນຄວາມສະ ຫງົບ.*

ສະພາແຫ່ງຊາດ. (2015). *ລັດຖະທຳມະນູນ ແຫ່ງ ສປປ ລາວ.*

ສະພາແຫ່ງຊາດ. (2018). *ກົດໝາຍ ວ່າດ້ວຍນາຍທະຫານກອງ ທັບ ປະຊາຊົນລາວ (ສະບັບປັບປຸງ).*

ອາລະສານອາລຸນໃໝ່. (2016). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ X ພັກປະຊາຊົນປະຕິວັດລາວ.* ໂຮງພິມແຫ່ງລັດ

ອາລະສານອາລຸນໃໝ່. (2021). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ*, ໂຮງພິມແຫ່ງລັດ.